
ກວດສອບຄວາມເປັນຈິງ
ບົດຮຽນທີ 1
ສຳລັບວັນທີ 4 ເມສາ 2026




“ພຣະບິດາເຈົ້າ
ຮັກເຮົາຢ່າງໃດ
ເຮົາກໍຮັກພວກ
ເຈົ້າຢ່າງນັ້ນ, ຈົ່ງ
ຕັ້ງຢູ່ໃນຄວາມ
ຮັກຂອງເຮົາ.”
ໂຢຮັນ 15:9

ແຕ່ລະຄົນໃນພວກເຮົາມີຄວາມສຳພັນກັບພຣະເຈົ້າໃນຮູບແບບທີ່ແຕກຕ່າງກັນໄປ. ແຕ່ວ່າພວກເຮົາເຫັນດີນຳກັນໝົດໃນສິ່ງໜຶ່ງຄື: ຄວາມສຳພັນນີ້ສາມາດ (ແລະຄວນຈະ) ເຕີບໃຫຍ່ຂຶ້ນ.



ຂັ້ນຕອນທຳອິດທີ່ພວກເຮົາຕ້ອງເຮັດ ເພື່ອການເຕີບໃຫຍ່ ແມ່ນຕ້ອງຕື່ນຕົວກັບສະຖານະການປະຈຸບັນ

ພຣະເຈົ້າໄດ້ມອບຂ່າວສານທົ່ວໄປໃຫ້ແກ່ພວກເຮົາ ກ່ຽວກັບການກວດສອບສະຖານະຈິດໃຈຂອງຄຣິດຕະຈັກໃນວາລະສຸດທ້າຍຂອງຊີວິດ. ດຽວນີ້ແມ່ນຂຶ້ນກັບພວກເຮົາເອງເພື່ອທີ່ຈະຕື່ນໂຕຂອງພວກເຮົາ ເພື່ອທີ່ຈະເຂົ້າໃຈເຖິງພາກສ່ວນຂອງຂ່າວສານທີ່ສາມາດນຳໄປໃຊ້ໄດ້ກັບພວກເຮົາ, ແລະ ວິທີທີ່ຈະເຮັດໃຫ້ຄວາມສຳພັນຂອງພວກເຮົາກັບພຣະເຈົ້າເຂັ້ມແຂງຂຶ້ນ.



- ຂ່າວສານຂອງພຣະເຈົ້າ (ພນມ 3:14-22):
  - ການປະເມີນຜົນ (ຂໍ້ທີ 14-17)
  - ທາງອອກ (ຂໍ້ທີ 18)
  - ຜົນທີ່ໄດ້ຮັບ (ຂໍ້ທີ 19-20)
  - ຄວາມເພິ່ງພໍໃຈ (ຂໍ້ທີ 21-22)
- ການກວດສອບຄວາມຈິງ (ຢຮ 15:1-11):
  - ກິ່ງ ແລະ ເຄືອອະງຸ່ນ
  - ການຫລໍ່ລ້ຽງ

# ຂ່າວສານ
# ຂອງພຣະເຈົ້າ

(ພນມ 3:14-22)

# ການປະເມີນຜົນ

“ເພາະເຈົ້າເວົ້າວ່າ, ‘ຂ້ອຍຮັ່ງມີເປັນດີແລ້ວ ຂ້ອຍບໍ່ຕ້ອງການສິ່ງໃດໆອີກ.’ ແຕ່ເຈົ້າບໍ່ຮູ້ວ່າເຈົ້າເປັນຄົນທຸກໄຮ້ເຂັນໃຈ ແລະເປັນຄົນໜ້າສົງສານສໍ່າໃດ ເປັນຄົນຂັດສົນ ເປັນຄົນຕາບອດແລະເປືອຍກາຍຢູ່.” (ພຣະນິມິດ 3:17)



ຂ່າວສານທີ່ມີໄປເຖິງຄຣິດຕະຈັກທັງ 7, ສະແດງໃຫ້ເຫັນເຖິງສະພາບຂອງຄຣິດຕະຈັກໂລກ ຕັ້ງແຕ່ຍຸກອັກຄະສາວົກ ຈົນເຖິງປະຈຸບັນ (ພນມ 2-3). ໃນການນຳສະເໜີຂ່າວສານສຳລັບຍຸກຂອງພວກເຮົານີ້ແມ່ນຍຸກ (ລາວດີເກອາ), ພຣະເຢຊູຊົງສະແດງພຣະອົງເອງດັ່ງ “ [ອາແມນ], [ຄວາມຈິງ], ຜູ້ຊື່ສັດ ແລະ ເປັນພະຍານແຫ່ງຄວາມຈິງ” (ພນມ 3:14).





ເມື່ອພວກເຮົາເບິ່ງທີ່ໂຕຂອງພວກເຮົາແລ້ວ ພວກເຮົາຈະເຫັນ *ຄວາມຈິງຂອງພວກເຮົາ*: ວ່າຂ້ອຍຮັ່ງມີເປັນດີແລ້ວ ຂ້ອຍບໍ່ຕ້ອງການສິ່ງໃດໆອີກ” (ພນມ 3:17a).

ແຕ່ພຣະເຈົ້າຊົງເຫັນ *ຄວາມຈິງໃນໂຕພວກເຮົາຄື*, : “ເຈົ້າເປັນຄົນທຸກໄຮ້ເຂັນໃຈ ແລະ ເປັນຄົນໜ້າສົງສານສໍ່າໃດ ເປັນຄົນຂັດສົນ ເປັນຄົນຕາບອດ ແລະ ເປືອຍກາຍຢູ່” (ພນມ 3:17b).



ເວລານີ້ ເປັນເວລາທີ່ພວກເຮົາຄວນຈະປະເມີນໂຕເອງ. ຂ້ອຍໄດ້ຕື່ນໂຕກັບສິ່ງທີ່ຂ້ອຍມີບໍ?, ແລະ ຂ້ອຍຍັງຕ້ອງການຍັງອີກ? ຂ້ອຍໄດ້ເຕີບໃຫຍ່ໃນຄວາມສຳພັນກັບພຣະເຈົ້າຫລາຍປານໃດ? ຂ້ອຍໄດ້ປ່ຽນເປັນຄົນທີ່ດີຂຶ້ນບໍ?



# ທາງອອກ

“ສະນັ້ນ ເຮົາຈຶ່ງແນະນຳເຈົ້າໃຫ້ຊື້ຄຳທີ່ຫລອມບໍຣິສຸດແລ້ວຈາກເຮົາ ຊຶ່ງເປັນຄຳແທ້ເພື່ອເຈົ້າຈະໄດ້ເປັນຄົນຮັ່ງມີ ແລະຈົ່ງຊື້ເສື້ອຜ້າຂາວນຸ່ງຫົ່ມ ເພື່ອປົກປິດຮ່າງກາຍອັນໜ້າອັບອາຍຂອງເຈົ້າ ແລະຈົ່ງຊື້ຢາໃສ່ຕາຂອງເຈົ້າ ເພື່ອເຈົ້າຈະໄດ້ເຫັນຮຸ່ງ.”
ພຣະນິມິດ 3:18

ຄວາມຮູ້ສຶກສະດວກສະບາຍກັບສະຖານະຂອງພວກເຮົາສົ່ງຜົນໃຫ້ເກີດ ຄວາມເສີຍເມີຍ (ອຸ່ນໆ), ພຣະເຢຊູແນະນຳພວກເຮົາໃຫ້ປະຕິບັດ 3 ຢ່າງດັ່ງນີ້:

## ຊື້ຄຳທີ່ຫລອມບໍຣິສຸດ



ພວກເຮົາບໍ່ຄວນຕັ້ງຢູ່ໃນຄວາມເຄິ່ງໆກາງໆ ຫລືຮຽນພຣະຄຳພີ ແບບຜິວເຜີນ. ພວກເຮົາຄວນລະຖິ້ມຫລັກຄຳສອນຂອງມະນຸດ ແລະ ສຶກສາພຣະຄຳພີໃຫ້ເລິກຂຶ້ນ ເພື່ອກຳຈັດຄວາມບໍ່ສົມບູນແບບ (ກາກ) ອອກຈາກຄວາມເຂົ້າໃຈຂອງພວກເຮົາ.

## ຊື້ເສື້ອຜ້າຂາວ



ຍອມຮັບເອົາຄວາມຊອບທຳຂອງພຣະຄຣິດ ໃນຖານະສິ່ງດຽວທີ່ຈະບັນບຸຄວາມລອດພົ້ນ. ການພະຍາຍາມນຳສະເໜີໂຕຂອງພວກເຮົາຕໍ່ພຣະເຈົ້າດ້ວຍການປະຕິບັດຄວາມຊອບທຳດ້ວຍຕົນເອງ ເປັນການສະແດງການເປືອຍກາຍຕໍ່ພຣະອົງ

## ຊື້ຢາໃສ່ຕາ



ຮັບເອົາພຣະວິນຍານບໍຣິສຸດ ມີພຽງພຣະວິນຍານບໍຣິສຸດເທົ່ານັ້ນທີ່ສາມາດເຮັດໃຫ້ພວກເຮົາໄຈ້ແຍກ ແລະ ຮັບຮູ້ເຖິງສະພາບທີ່ແທ້ຈິງຂອງພວກເຮົາໄດ້

# ຜົນທີ່ໄດ້ຮັບ

"ເບິ່ງແມ! ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະໄຂປະຕູ ເຮົາຈະເຂົ້າໄປຫາຜູ້ນັ້ນ ແລະຈະຮ່ວມຮັບປະທານອາຫານກັບຜູ້ນັ້ນ ແລະຜູ້ນັ້ນຈະຮ່ວມຮັບປະທານອາຫານກັບເຮົາ."
ພຣະນິມິດ 3:20

ມີບັນຫາໜຶ່ງ. ຈິດວິນຍານຂອງຂ້ອຍຮູ້ສຶກດີ, ແຕ່ພຣະເຢຊູຊົງຢາກໃຫ້ຂ້ອຍພັດທະນາ. ຢ່າງໃດກໍ່ຕາມ, ຖ້າວ່າຂ້ອຍບໍ່ຕື່ນໂຕກ່ຽວກັບການປ່ຽນແປງ, ຂ້ອຍກໍ່ຈະບໍ່ປ່ຽນແປງເລີຍ. ຂ້ອຍຈະບໍ່ຕ້ອງການທີ່ຈະຊື້ ໃນສິ່ງທີ່ຂ້ອຍຄິດວ່າມີແລ້ວ.

ເພື່ອແກ້ໄຂບັນຫານີ້, ພຣະເຢຊູຊົງມີຂັ້ນຕອນຂອງພຣະອົງ: "ຝ່າຍເຮົາ ເຮົາຮັກຜູ້ໃດ ເຮົາກໍຕິຕຽນຂ້ຽນສອນຜູ້ນັ້ນ. ເຫດສະນັ້ນ ຈົ່ງມີໃຈຮ້ອນຮົນແລະກັບໃຈເສຍໃໝ່." ພຣະນິມິດ 3:19

ການຕຳນິ ແລະ ການລົງໂທດຂອງພຣະເຢຊູ ບໍ່ແມ່ນສິ່ງທີ່ເປັນທາງລົບ. ພຣະອົງປາຖະໜາທີ່ຈະສົນທະນາ, ພຣະອົງຕ້ອງການທີ່ຈະນັ່ງລົງກັບພວກເຮົາຢ່າງມິດງຽບ ແລະກໍ່ລົມກັນ... "ເບິ່ງແມ! ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະໄຂປະຕູ ເຮົາຈະເຂົ້າໄປຫາຜູ້ນັ້ນ ແລະຈະຮ່ວມຮັບປະທານອາຫານກັບຜູ້ນັ້ນ ແລະຜູ້ນັ້ນຈະຮ່ວມຮັບປະທານອາຫານກັບເຮົາ.ພຣະນິມິດ 3:20

ພຣະເຢຊູຊົງເຄາະທີ່ປະຕູຫົວໃຈຂອງຂ້ອຍ ແລະ ລໍຖ້າຢ່າງອົດທົນ. ພຣະອົງບໍ່ໄດ້ລົບກວນຊີວິດຂອງຂ້ອຍ ທີ່ຈະບັງຄັບຂ້ອຍໃຫ້ສ້າງຄວາມສຳພັນກັບພຣະອົງ. ການຕັດສິນໃຈທີ່ຈະເປີດປະຕູນັ້ນ ແມ່ນເປັນຂອງຂ້ອຍວ່າຈະເປີດຫລືບໍ່.



# ຄວາມເພິ່ງພໍໃຈ

"ຜູ້ທີ່ໄຊຊະນະ ເຮົາຈະໃຫ້ຜູ້ນັ້ນນັ່ງກັບເຮົາເທິງບັນລັງຂອງເຮົາ ເໝືອນກັບທີ່ເຮົາມີໄຊຊະນະແລ້ວ ແລະໄດ້ນັ່ງກັບພຣະບິດາເຈົ້າຂອງເຮົາເທິງຣາຊບັນລັງຂອງພຣະອົງ." ພຣະນິມິດ 3:21

ພຣະເຢຊູຊົງຮູ້ວ່າເສັ້ນທາງນັ້ນບໍ່ງ່າຍເລີຍ. ພຣະອົງຊົງຮູ້ຄວາມພະຍາຍາມຂອງພວກເຮົາທີ່ຈະຊື້ທອງ, ຊື້ເສື້ອ, ແລະ ຢາຢອດຕານັ້ນ. ພຣະອົງຮູ້ອຸປະສັກຂອງພວກເຮົາໃນການທີ່ຈະເອົາຊະນະການເປັນຄົນເສີຍເມີຍ (ອຸ່ນໆ), ຈຶ່ງເປີດປະຕູອອກ ແລະ ສ້າງຄວາມສຳພັນກັບພຣະອົງ. ນັ້ນເປັນເຫດຜົນທີ່ພຣະອົງບອກພວກເຮົາວ່າ: ພວກເຈົ້າສາມາດເອົາຊະນະໄດ້, ດັ່ງທີ່ເຮົາມີໄຊຊະນະແລ້ວ (ພນມ 3:21).

ພຣະອົງຊົງຮູ້ອີກວ່າ ພວກເຮົາຈະບໍ່ເລີ່ມຕົ້ນດ້ວຍຂັ້ນຕອນທຳອິດກ່ອນແນ່ນອນ. ສະນັ້ນ ພຣະອົງຈຶ່ງເປັນຜູ້ລິເລີ່ມຫົນທາງກ່ອນພວກເຮົາສະເໝີ





ພຣະອົງຕັດສິນໃຈສ້າງພວກເຮົາຂຶ້ນມາ (ປຖມກ 2:7)



ເມື່ອພວກເຮົາມີຄວາມບາບ ພຣະອົງຍັງສະແຫວງຫາພວກເຮົາຢູ່(ປຖມກ. 3:8-9)



ພຣະອົງສະຫລະພຣະອົງເອງ ເພື່ອຊ່ວຍພວກເຮົາ(ຢຮ 3:16)



ພຣະອົງຢາກຈະມອບລາງວັນໃຫ້ແກ່ພວກເຮົາ: ເພື່ອທີ່ນະໄດ້ນັ່ງທີ່ບັນລັງກັບພຣະອົງ, ແລະ ເພື່ອມ່ວນຊື່ນກັບສິ່ງທີ່ເປັນນິຣັນດອນໃນຣາຊບັນລັງຂອງພຣະອົງ(ພນມ. 3:21)

ກະແຈສູ່ການປະພຶດແບບສະຫວັນນີ້ (ເຊິ່ງພວກເຮົາບໍ່ສົມຄວນໄດ້ຮັບ) ແມ່ນຄວາມຮັກ: "ເຮົາຈຶ່ງສືບຕໍ່ໃຫ້ຄວາມຮັກອັນໝັ້ນຄົງແກ່ເຈົ້າ" (ຢຣມຢ 31:3). ພຣະອົງຢາກຈະມີຄວາມສຳພັນກັບພວກເຮົາ. ຂ້ອຍຈຳເປັນຕ້ອງມີຄວາມສຳພັນກັບພຣະອົງບໍ? ຂ້ອຍຄວນຈະເປີດປະຕູຫົວໃຈສຳລັບພຣະອົງ ແລະ ຮັກພຣະອົງດັ່ງທີ່ພຣະອົງຮັກຂ້ອຍບໍ?

# ກອດສອບ ຄວາມເປັນຈິງ

(ໂຢຮັນ  15:1-11)

# ກິ່ງ ແລະ ເຄືອອະງຸ່ນ

""ເຮົາເປັນເຄືອອະງຸ່ນ ພວກເຈົ້າເປັນກິ່ງ ຜູ້ໃດທີ່ຢູ່ໃນເຮົາ ແລະເຮົາຢູ່ໃນຜູ້ນັ້ນ, ຜູ້ນັ້ນແຫລະ ຈະເກີດຜົນຫລາຍ. ເພາະຖ້າແຍກຈາກເຮົາແລ້ວ ພວກເຈົ້າບໍ່ສາມາດເຮັດສິ່ງໃດໄດ້. ໂຢຮັນ 15:5



ກ່ອນທີ່ພຣະອົງຈະເສຍຊີວິດ, ພຣະອົງໄດ້ປະກາດວ່າພຣະອົງເປັນ "ເຄືອອະງຸ່ນ" ແລະ ສາວົກຂອງພຣະອົງ ແມ່ນ "ກິ່ງ" ພຣະອົງໝາຍຄວາມວ່າແນວໃດ?

ກິ່ງສາມາດຢູ່ໄດ້ໂດຍປາສະຈາກການຍຶດຕິດກັບເຄືອອະງຸ່ນໄດ້ເປັນເວລາໜ້ອຍໜຶ່ງ, ແຕ່ໃນທີ່ສຸດມັນກໍ່ຈະຫ່ຽວແຫ້ງໄປ, ດັ່ງນັ້ນຖ້າພວກເຮົາບໍ່ຢາກສູນເສຍຊີວິດອັນນິຣັນດອນໄປ, ພຣະເຢຊູຊົງກ່າວວ່າ: "ຈົ່ງເຂົ້າສະໜິດຢູ່ໃນເຮົາ" (ຢຮ 15:4). ໃນຂໍ້ພຣະຄຳພີ 11 ຂໍ້, ທີ່ພຣະເຢຊູຊົງໄດ້ບອກເຖິງຄຳອຸປະມາເລື່ອງເຄືອອະງຸ່ນ ແລະ ກິ່ງຂອງມັນ. ພຣະອົງໃຊ້ຄຳກິລິຍາທີ່ວ່າ "ຕິດຢູ່, ຕິດສະໜິດ" 10 ຄັ້ງ, ສິ່ງນີ້ຕ້ອງເປັນສິ່ງທີ່ສຳຄັນແທ້ໆພຣະອົງຈຶ່ງເນັ້ນ.



ການເຂົ້າສະໜິດກັບພຣະເຈົ້າ ເປັນຢາແກ້ພິດ ຫລື ເປັນທາງອອກສຳລັບຄຣິດຕະຈັກລາວດີເກອາ (ອຸ່ນໆ) ຍິ່ງໄປກວ່ານັ້ນ ມັນເປັນແຫລ່ງຂອງຄວາມສຸກ (ຢຮ 5:11). ແລ້ວພວກເຮົາຈະເຂົ້າສະໜິດກັບພຣະເຈົ້າໄດ້ແນວໃດ?

ໂດຍການເຊື່ອຟັງຄຳສັ່ງຂອງພຣະອົງ, ຮັກສາພຣະບັນຍັດຂອງພຣະອົງ (ຢຮ 15:10). ນີ້ແມ່ນຄວາມຮັກທີ່ຕອບສະໜອງໃຫ້ກັບຄວາມຮັກທີ່ພຣະອົງມີຕໍ່ພວກເຮົາ (1 ຢຮ 4:19).



# ການຫລໍ່ລ້ຽງ

“ຈົ່ງເຂົ້າສະໜິດຢູ່ໃນເຮົາ ແລະເຮົາເຂົ້າສະໜິດຢູ່ໃນພວກເຈົ້າ, ກິ່ງຈະເກີດຜົນເອງບໍ່ໄດ້ ນອກຈາກຈະຕິດຢູ່ກັບເຄືອສັນໃດ ພວກເຈົ້າຈະເກີດຜົນເອງບໍ່ໄດ້ ນອກຈາກພວກເຈົ້າຈະເຂົ້າສະໜິດຢູ່ໃນເຮົາສັນນັ້ນ.” ໂຢຮັນ 15:4





ໃນລະດູໜາວ, ກິ່ງອະງຸ່ນແມ່ນຈະຕິດຢູ່ກັບເຄືອ, ແຕ່ບໍ່ສາມາດເກີດໝາກໄດ້. ເປັນຫຍັງ? ເພາະວ່າພວກມັນບໍ່ໄດ້ຮັບການຫລໍ່ລ້ຽງ

ຕ້ອງລໍຖ້າເຖິງລະດູໃບໄມ້ປົ່ງເທົ່ານັ້ນ ກິ່ງເຫລົ່ານີ້ຈຶ່ງຈະໄດ້ຮັບການຫລໍ່ລ້ຽງຈາກເຄືອ, ແລະ ໃບ ແລະແໜງນ້ອຍໆ. ຄໍາສັບທີ່ ທ່ານໂຢຮັນໃຊ້ແມ່ນພາສາກຣີກ ທີ່ສື່ໃຫ້ເຫັນວ່າ ກິ່ງນັ້ນໄດ້ຖືກແຕກຫັກ ແລະ ໄດ້ຮັບການຕໍ່ຄືນຈາກເຄືອອີກເທື່ອໜຶ່ງ

ບໍ່ວ່າພວກເຮົາຈະເປັນກິ່ງທີ່ຫ່ຽວແຫ້ງ ຫລື ຫໍ່ທີ່ໃກ້ຕາຍແລ້ວກໍ່ຕາມ, ໜຶ່ງສິ່ງທີ່ຊັດເຈນ: ພວກເຮົາຕ້ອງການການຫລໍ່ລ້ຽງຈາກເຄືອ. ແລ້ວພວກເຮົາຈະປຽບທຽບການຫລໍ່ລ້ຽງຄືກັບຫຍັງ?

ໃນການສົນທະນາດຽວກັນ (ຢຮ 14-17), ພຣະເຢຊູໄດ້ໃກ້ຄໍາອະທິບາຍດັ່ງນີ້: ພຣະວິນຍານບໍຣິສຸດ ເປັນຜູ້ທີ່ເຮັດສິ່ງຕ່າງໆໃນໂຕພວກເຮົາເພື່ອໃຫ້ພວກເຮົາມີຊີວິດ ຖ້າວ່າພວກເຮົາຍອມໃຫ້ພຣະອົງເປັນຜູ້ນໍາ

- ພຣະອົງແມ່ນຜູ້ປອບໂຍນຂອງພວກເຮົາ(ຢຮ 14:16-17)
- ພຣະອົງເປີດເຜີຍພຣະເຢຊູໃຫ້ແກ່ພວກເຮົາ(ຢຮ 15:26)
- ເຮັດໃຫ້ພວກເຮົາເຫັນເຖິງບາບຂອງພວກເຮົາ(ຢຮ 16:8)
- ຊີ້ແຈງຄວາມຈິງທັງໝົດໃຫ້ແກ່ພວກເຮົາ (ຢຮ 16:13)





"ທອງຄຳໃນທີ່ແນະນຳໃຫ້ໃນບ່ອນນີ້ ແມ່ນສິ່ງທີ່ຜ່ານການລອງດ້ວຍໄຟແລ້ວ, ຄືຄວາມເຊື່ອ ແລະ ຄວາມຮັກ. ເຮັດໃຫ້ຫົວໃຈໝັ້ນຄົງ;ເພາະມັນໄດ້ຖືກຊຳລະຈົນບໍຣິສຸດແລ້ວ ແລະເມື່ອມັນຜ່ານການຖືກທົດສອບຫລາຍເທົ່າໃດ ຄວາມບໍຣິສຸດຂອງມັນ ກໍຈະຍິ່ງເປັງປະກາຍຫລາຍຂຶ້ນເທົ່ານັ້ນ. ເສື້ອສີຂາວ ແມ່ນຄວາມບໍຣິສຸດຂອງອຸປະນິໄສ, ແມ່ນຄວາມຊອບທຳຂອງພຣະຄຣິດທີ່ຊົງປະທານໃຫ້ແກ່ຄົນບາບ, ນີ້ແມ່ນເຄື່ອງນຸ່ງທີ່ມີເນື້ອຜ້າ ແຫ່ງສະວຫນຢ່າງແທ້ຈິງ, ເຊິ່ງພວກເຮົາຈະຊື້ໄດ້ຈາກຄຣິດເທົ່ານັ້ນ ໂດຍຈ່າຍເປັນການຍອມຈຳນົນ ແລະ ເຊື່ອຟັງດ້ວຍຄວາມເຕັມໃຈ. ຢາຢອດຕາ ແມ່ນສະຕິປັນຍາ ແລະພຣະຄຸນທີ່ຊ່ວຍໃຫ້ພວກເຮົາສາມາດໄຈ້ແຍກລະຫວ່າງຄວາມຊົ່ວ ແລະ ຄວາມດີ, ແລະກວດພົບຄວາມບາບບໍ່ວ່າຈະມາໃນຮູບແບບໃດກໍ່ຕາມ. ພຣະເຈົ້າຊົງປະທານດວງຕາໃຫ້ແກ່ຄຣິດຕະຈັກຂອງພຣະອົງ. ແລະ ຊົງຕ້ອງການໃຫ້ພວກເຂົາເຈີມດວງຕານັ້ນດ້ວຍສະຕິປັນຍາ. ເພື່ອໃຫ້ເບິ່ງເຫັນໄດ້ຢ່າງຊັດເຈນ. ແຕ່ຄົນຈຳນວນຫລາຍຢາກຈະທຳລາຍດວງຕາຂອງຄຣິດຕະຈັກ ຖ້າວ່າເປັນໄດ້. ເພາະວ່າພວກເຂົາບໍ່ຕ້ອງການທີ່ຈະໃຫ້ການກະທຳຂອງຕົນເອງ ໄດ້ປາກົດອອກຕໍ່ຄວາມສະຫວ່າງ, ຢ້ານວ່າຈະຖືກຕຳນິ, ຢາຢອດຕາຈາກສະຫວັນນີ້ຈະປະທານຄວາມກະຈ່າງແຈ້ງໃຫ້ເຂົ້າໃຈໄດ້. ພຣະຄຣິດຊົງເປັນຄັງລວມແຫ່ງພຣະຄຸນທັງປວງ ພຣະອົງກ່າວວ່າ "ຈົ່ງຊື້ຈາກເຮົາ" (ພນມ 3:18)."

EGW (Testimonies for the Church, vol. 4, p. 88)